ອ້າຍອິນທວາເອີຍ!

ຂໍຂອບໃຈນຳອ້າຍ ທີ່ຊາຍສົ່ງເປັນຄຳສອນ

ທັງສອງກອນທີ່ຊາຍຂຽນ ນ້ອງອ່ານຮຽນຈຶ່ງເຫັນແຈ້ງ

ອ້າຍບໍ່ແປງຄຳເວົ້າ ຖແລງເອົາຫຼືແຕ້ມຕື່ມ

ຊາບຊຶ້ມຫມົດທຸກຂໍ້ ທີ່ລໍນ້ອງຜູ້ຫ່າງຫນີ

ການຈາກໄປຄັ້ງນີ້ ກະວີຊື່ສາວຫຼັກເຈັດ

ເຮັດໃຫ້ຫຼາຍຄົນງົງ ບາງຜ່ອງຫຼົງຢືນເກົ້

ສ່ວນນາງເອງ ໄດ້ລະເມີນອນໄຫ້ ເສັຽໃຈຍ້ອນເປັນຫ່ວງ

ຍ້ອນວ່າດວງບໍ່ໃຫ້ ບືນໄດ້ກໍບໍ່ດັງ ອ້າຍເອີຍ

ຄວາມອຸກອັ່ງເອົ້າແຫນ້ນ ແສນຫມື່ນຢູ່ໃນຈິດ

ຄິດຫາຫົນທາງໄປ ອັ່ງໃນມະໂນນ້ອງ

ສັ່ງມາຫມອງໃຈເສົ້າ ຊິທົນເອົາກໍຫນັກເຫນື່ອຍ

ມີແຕ່ຫາບຢູ່ເລື້ອຍ ບໍ່ມີມື້ວ່າຊິວາງ ອ້າຍເອີຍ

ສິ່ງທີ່ນາງເລືອກໄດ້ ດັບໄຟຢູ່ໃນຫົວໃຈ

ຕ້ອງຫ່າງໄລເວທີ ການກະວີພຽງຄັ້ງ

ວັນຫຼັງທຳໃຈໄດ້ ຊິກັບຄືນມາໃຫມ່

ຖ້າວ່າບຸນບໍ່ໃຫ້ ບໍ່ຫວັງໄດ້ຕ່າວມາ

ອ້າຍອິນທວາເອີຍ!

ສາວຫຼັກເຈັດດອກຟ້າ ໄດ້ລາຫ່າງເຮົາຫນີ

ສືພັນດອນຊິມາຮັບ ຕໍ່ກອນທີ່ຂຽນໄວ້

ບໍ່ໄດ້ໄລລາຂ້າງ ເດີນທາງສາຍໃຫມ່

ໄປຢູ່ໃສ   ຊື່ສຽງດັງກ້ອງຟ້າ      ປາກການັ້ນອາດປ່ຽນແປງ

ສີພັນດອນບໍ່ໄດ້ແກ້ງ      ຖແລງອອກເປັນຄຳຫວານ

ສາຍສັມພັນຊາວຫຼັກເຈັດ      ເຮັດໃຫ້ນາງຕ້ອງໂງໂຄ້ງ

ໃຈປະສົງຫນັກແຫນ້ນ      ແດນກະວີ   ໃຫ້ເຊົາຊ່າ

ກຸຫຼາບຂາວກໍຕຽມທ່າ   ຈຳປາແດງເພີ່ນຊິຍູ້   ກຸໄລອ້າຍກໍນັກຊຽນ   ແທ້ເນີ

ອ້າຍຜູ້ວຽນເບິ່ງຟ້າ      ນະພາຄູ່ກັບຕາວັນ

ຍາມກາງຄືນພັດຫມາຍຈັນ      ກະຕ່າຍຝັນຢາກຄຽງເຈົ້າ

ດວງຈັນເອີຍ!   ກະຕ່າຍທົນຄວາມເສົ້າ      ເຫງົາໃຈຢາກຮັກແກ່ນ

ແຫງນເບິ່ງຈັນຢູ່ຟ້າ      ສັງມາລ້ອມແຕ່ຫມູ່ດາວ

ດວງຈັນຂາວສະອາດແຈ້ງ      ແສງສິ່ງເປັນປະກາຍ

ສັງມາທໍຣະມານຫຼາຍ      ກະຕ່າຍຫມາຍປອງເຈົ້າ

ຈຶ່ງເອົາເປັນນາມກ້ອງ      ປາກກາທອງຕັ້ງຊື່   ດີແລ້ວ

ຢາກໃຫ້ໂລກເຊົາລື   ຫຼັກເຈັດຊື່ກ້ອງຟ້າ   ກະວີນັ້ນແມ່ນເກ່ງຫຼາຍ   ອ້າຍເອີຍ.

ໂດຍ:   ສີພັນດອນ  ດອກບົວກາງວັນ